# ພິໄຫວເອົາຕົວລົບຫຼີກ ໃນເວລາເກີດແຜ່ນດິນໄຫວ

행정안전부
Ministry of the Interior and Safety

여성가족부
Ministry of Gender Equality and Family

한국건강가정진흥원
KOREAN INSTITUTE FOR HEALTHY FAMILY

ເຫດການແຜ່ນດິນໄຫວ ບໍ່ສາມາດຮູ້ໄດ້ຢ່າງແນ່ນອນວ່າ ມັນຊິເກີດຂຶ້ນເມື່ອໃດ ສະນັ້ນ ມັນຈຳເປັນທີ່ຕ້ອງ ໄດ້ຮູ້ພິກໄຫວໃນ ການເອົາຕົວລົບຫຼີກ.

## ເວລາໄດ້ຍິນແຜ່ນດິນສັ່ນ?



ເວລາໄດ້ຍິນແຜ່ນດິນໄຫວ ຕ້ອງໄດ້ເອົາຕົວລົບຫຼີກຢູ່ກ້ອງໂຕະ, ພ້ອມທັງຈັບຂາໂຕະໄວ້.

## ເວລາການສັ່ນສະເທືອນຢຸດເຊົາແລ້ວ?




ເມື່ອການສັ່ນສະເທືອນ ຢຸດເຊົາແລ້ວ, ປິດສະວິດໄຟ ແລະ ແກັດແລ້ວ ໄຂປະຕູແລ່ນອອກໄປລີ້ຢູ່ນອກ.

## ການແລ່ນອອກໄປນອກ?



ການແລ່ນອອກໄປນອກ ຕ້ອງໄດ້ນຳໃຊ້ຂັ້ນໄດ ແລະ ແລ່ນອອກໂດຍໄວ. (ຫ້າມໃຊ້ລິບ)

※ ຖ້າເກີດແຜ່ນດິນໄຫວໃນເວລາເຮົາກຳລັງຂີ່ລິບ ຕ້ອງກົດປຸ່ມໝົດທຸກຊັ້ນ, ເມື່ອລິບຢຸດຢູ່ຊັ້ນໃດແລ້ວຕ້ອງແລ່ນອອກທັນທີ.

## ຖ້າເຮົາກຳລັງຢູ່ທາງນອກ ຕຶກອາຄານ?



ໃນກໍລະນີເຮົາກຳລັງຢູ່ທາງນອກຕຶກ, ຕ້ອງໄດ້ເອົາກະເປົາ ຫຼື ມືປົກຫົວໄວ້, ຈາກນັ້ນ ສັງເກດເບິ່ງເຂດອ້ອມຂ້າງແລ້ວ ກໍ່ລົບຫຼີກ ຕາມຊ່ອງຫວ່າງ.

## ບ່ອນລີ້ໄພ ທີ່ປອດໄພທີ່ສຸດ ແມ່ນ?




ຕ້ອງລະວັງຊາກຫັກພັງ ຈາກຕຶກ ຕົກຖືກຕົວເຮົາ, ພະຍາຍາມແລ່ນໄປໃນສວນສາທາລະນະ ຫຼື ເດີ່ນບານ ບ່ອນທີ່ກວ້າງຂວາງ. (ຫ້າມນຳໃຊ້ລົດ)

## ເມື່ອໄປຮອດສະຖານທີ່ລີ້ໄພແລ້ວ?




ຕ້ອງປະຕິບັດຕາມຄຳແນະນຳ ຫຼື ປະສານສຳພັນ ຈາກອົງການຈັດຕັ້ງ

# ພິໄຫວການເອົາຕົວລົບຫຼີກ ໃນເວລາເກີດແຜ່ນດິນໄຫວ

ເຫດການແຜ່ນດິນໄຫວ ເກີດເມື່ອໃດ ພວກເຮົາ ບໍ່ສາມາດຈະຄາດຄະເນໄດ້,
ເພາະສະນັ້ນ ມັນຈຳເປັນທີ່ຕ້ອງ ໄດ້ຮູ້ພິກໄຫວ ໃນການເອົາຕົວລົບຫຼີກ.

행정안전부
Ministry of the Interior and Safety
여성가족부
Ministry of Gender Equality and Family
한국건강가정진흥원
KOREAN INSTITUTE FOR HEALTHY FAMILY

## ກໍລະນີ ເຮົາກຳລັງຢູ່ໃນເຮືອນ



ຕ້ອງແລ່ນເຂົ້າໄປລົບຫຼີກຕົວໃນກ້ອງໂຕະ,
ຖ້າການສັ່ນສະເທືອນຢຸດເຊົາແລ້ວ ຕ້ອງຮີບມອດໄຟ ແລະ
ແກັດ ແລ້ວ ເປີດປະຕູແລ່ນອອກໄປ ນອກເຮືອນ.

## ກໍລະນີ ຢູ່ນອກເຮືອນ



ເອົາຖົງໄພ ຫຼື ສອງຝາມືປົກຫົວ ພ້ອມທັງສັງເກດ
ເບິ່ງຊາກຫັກພັງຂອງຕຶກ, ພະຍາຍາມບໍ່ຢືນຢູ່ໃກ້ຕຶກ ຫຼື
ທາງລົດ, ຄວນແລ່ນ ໄປລີ້ຢູ່ເດີ່ນກິລາ ຫຼື ສວນສາທາ
ລະນະ ບ່ອນທີ່ກວ້າງຂວາງ.

## ກໍລະນີ ກຳລັງຂີ່ລິບ



ກົດໝົດທຸກປຸມຢູ່ໃນລິບ, ເມື່ອລິບຢຸດຢູ່ຊັ້ນໃດແລ້ວ
ຮີບລົງຈາກລິບ ແລ້ວໄປນຳໃຊ້ຂັ້ນໄດ.

※ ໃນເວລາກຳລັງເກີດແຜ່ນດິນໄຫວນັ້ນ
ຫ້າມໃຊ້ລິບເດັດຂາດ

## ກໍລະນີ ກຳລັງຢູ່ໃນໂຮງຮຽນ



ແລ່ນເຂົ້າກ້ອງໂຕະແລ້ວຈັບຂາໂຕະໄ
ວ້. ເມື່ອການສັ່ນສະເທືອນຢຸດເຊົາແລ້ວ
ພະຍາຍາມແລ່ນລີ້ຢູ່ເດີ່ນກິລາ.

## ກໍລະນີ ກຳລັງຢູ່ໃນຮ້ານຄ້າ ຫຼື ຮ້ານສັບພະສິນຄ້າ



ເຈັບເອົາເຄື່ອງຂອງທີ່ຕົກຈາກຕູ້ໂຊ ມາປົກປ້ອງຕົນໂຕ,
ພະຍາຍາມແລ່ນໄປຫາບ່ອນທີ່ມີຂັ້ນໄຊ ຫຼື
ມີເສົາ. ເມື່ອການສັ່ນສະ ເທືອນ ຢຸດເຊົາ ແລ້ວ
ຕ້ອງແລ່ນອອກໄປລີ້ຢູ່ທາງນອກ.

## ໃນກໍລະນີ ກຳລັງຢູ່ໃນໂຮງຮູບເງົາ ຫຼື ເດີ່ນບານ




ເອົາກະເປົາ ຫຼື ເຄື່ອງຂອງຕິດຕົວໃດໜຶ່ງທີ່ໃຫຍ່
ມາປົກປິດຕົນເອງ ແລະ ປະຈຳບ່ອນ
ເມື່ອມີການແນະນຳແລ້ວ ຈຶ່ງອອກໄປ ຕາມຄຳແນະນຳ

## ກໍລະນີກຳລັງຂີ່ລົດໄຟ



ຕ້ອງຈັບຂໍ້ເກາະ ຫຼື ເສົາ ໃນລົດໄຟ
ເພື່ອບໍ່ໃຫ້ຕົນເອງລົ້ມລົງພື້ນ. ເມື່ອລົດໄຟຈອດແລ້ວ
ຕ້ອງໄປຕາມຄຳສັນຍານ.

## ກໍລະນີ ກຳລັງຂັບລົດ




ເປີດໄຟສັນຍານສຸກເສີນ ພ້ອມທັງຜ່ອນຄວາ
ມໄວແລ້ວ ແອ່ນໄປຈອດຢູ່ແຄມເບື້ອງຂວາ,
ເປີດວິທະຍຸໄວ້ໃຫ້ໄດ້ຍິນດີແລ້ວ
ຊອກບ່ອນລີ້ ທີ່ເໝາະສົມ.

## ກໍລະນີ ກຳລັງຢູ່ເທິງພູ ຫຼື ຢູ່ໃນນ້ຳທະເລ



ຕ້ອງລະວັງດິນເຈື່ອນ, ຄວນໄປລີ້ໃນບ່ອນທີ່ປອດໄພ.
ຖ້າກຳລັງຢູ່ໃນຝັ່ງທະເລ, ເມື່ອໄດ້ຍິນສຽງເຕືອນແລ້ວ
ພະຍາຍາມແລ່ນ ໄປຫຼົບຫຼີກຢູ່ບ່ອນສູງ.